ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 2667 /ກງ

ລົງວັນທີ 22 AUG 2014

# ຄຳສັ່ງ

## ກ່ຽວກັບມາດຕະການກອດກາການຈັດເກັບລາຍຮັບ ທ້າຍສົກປີງົບປະມານ 2013-14 ຂອງຂະແໜງພາສີ

**************************

- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 241/ລບ ລົງວັນທີ 12 ກັນຍາ 2013 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ສົກປີ 2013-14.
- ອີງຕາມຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 09/ຄລສພ. ລົງວັນທີ 04ມີນາ 2014 ວ່າດ້ວຍໃຫ້ຄະນະພັກທຸກຂັ້ນເພີ່ມທະວີຄວາມຮັບຜິດຊອບນຳພາ ຊີ້ນຳວຽກງານເສດຖະກິດ- ການເງິນ ເພື່ອຮັກສາສະຖຽນນະພາບຂອງເສດຖະກິດມະຫາພາກ,ຊຸກຍູ້ຈັງຫວະເຕີບໂຕ ຂອງເສດຖະກິດຢ່າງຕໍ່ເນື່ອງຕາມທິດຍືນຍົງ.

ການຈັດຕັ້ງປະຕິບັດແຜນການຈັດເກັບລາຍຮັບຂອງຂະແໜງພາສີ ໃນສົກປີ2013-14 ເຫັນວ່າມີລັກສະນະຕັ້ງໜ້າສົມຄວນ ສາມາດດຸນດ່ຽງແຜນລາຍຈ່າຍຂອງລັດຖະບານໃນລະດັບໃດນຶ່ງ, ແຕ່ຄວາມຮຽກຮ້ອງຕ້ອງການທາງດ້ານລາຍຮັບງົບປະມານແຫ່ງລັດຍັງສູງ ເພື່ອຕອບສະໜອງເຂົ້າໃນການການພັດທະນາປະເທດຊາດໃນໄລຍະປະຈຸບັນ. ກະຊວງການເງິນ ສັງເກດເຫັນວ່າ ທ່າແຮງບົ່ມຊ້ອນໃນການຈັດເກັບລາຍຮັບຂອງຂະແໜງພາສີ ຍັງມີຫລາຍ, ສະນັ້ນ ເພື່ອເປັນການສ້າງຂະບວນຮັກຊາດແລະພັດທະນາໃນຂົງເຂດວຽກງານພາສີ ໃຫ້ມີຄວາມຟົດຟື້ນໂດຍຖືເອົາວຽກຄືກິນເດັ່ນໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ໂດຍສະເພາະ ການສູ້ຊົນຈັດເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ລື່ນແຜນການ ຫລາຍເທົ່າທີ່ຈະຫລາຍໄດ້.

ລັດຖະມົນຕີວ່າການກະຊວງການເງິນ ອອກຄຳສັ່ງ, ຄື :

1. ມອບໃຫ້ການນຳພາສີແຕ່ລະຂັ້ນ ເພີ່ມທະວີວຽກງານສຶກສາອົບຮົມການເມືອງແນວຄິດ, ປຸກລະດົມຈິດໃຈໃຫ້ພະນັກງານ-ສະມາຊິກພັກ ມີຄວາມຫ້າວຫັນ, ບຸກບືນ ສຸມຈິດໃຈໃນການຈັດຕັ້ງປະຕິບັດໜ້າທີ່ດ້ວຍ

ຄວາມຮັບຜິດຊອບສູງ ໃຫ້ສຳເລັດວຽກງານທີ່ໄດ້ຮັບມອບໝາຍ, ມີຈັນຍາບັນ, ຍົກສູງສະຕິຄວາມຮັບຜິດຊອບໜ້າທີ່ການເມືອງ ຖືເອົາຜົນປະໂຫຍດປະເທດຊາດເປັນຫລັກ, ມີນ້ຳໃຈເສຍສະຫລະ, ຕັດສິນໃຈສູງ ໃນການປະຕິບັດພາລະກິດ ທີ່ຂັ້ນເທິງມອບໝາຍໃຫ້ສຳເລັດ.

2. ບັນດາໜ້າວຽກງານຕົ້ນຕໍ ຕ້ອງໄດ້ຊຸ້ນຍູ້ຈູງໃນການຈັດຕັ້ງປະຕິບັດ, ຄື :

- ເອົາໃຈໃສ່ຄຸ້ມຄອງ,ກວດກາ ລາຄາແຈ້ງເສຍພາສີແລະພັນທະອື່ນ ຂອງສິນຄ້ານຳເຂົ້າ ໃຫ້ຖືກຕ້ອງກັບ ລາຄາຊື້ຂາຍຕົວຈິງ ທີ່ລະບຽບກົດໝາຍໄດ້ກຳນົດ ແລະ ຈັດຕັ້ງປະຕິບັດເປັນເອກະພາບ ໃນຂອບເຂດທົ່ວປະເທດ;
- ໃຫ້ກວດກາຄືນຈຳນວນລົດຄ້າງສາງ, ຖ້າກາຍກຳນົດ 4 ເດືອນ ບໍ່ມາພົວພັນແຈ້ງພາສີເປັນລາຍລະອຽດ ຕ້ອງໄດ້ດຳເນີນການ ຕາມລະບຽບກົດໝາຍ;
- ໃຫ້ປະສານສົມທົບກັບຂະແໜງ ປກສ ແລະ ຂະແໜງການກ່ຽວຂ້ອງ ເພື່ອກວດລົດນຳເຂົ້າບໍ່ຖືກຕ້ອງ, ລົດທີ່ບໍ່ມີທະບຽນນຳໃຊ້ ຫລື ປອມແປງເອກະສານ ເພື່ອດຳເນີນການແກ້ໄຂໂດຍໄວເປັນແຕ່ລະກໍລະນີ ຮັບປະກັນການປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ;
- ຊຸ້ນຍູ້ຈູງແກ້ໄຂຄະດີທາງພາສີທີ່ຍັງຄ້າງສະສາງ ໃຫ້ສຳເລັດໂດຍໄວ ໂດຍສະເພາະຄະດີໄມ້ຮິບເປັນຂອງລັດ ຕ້ອງຈັດຕັ້ງຄະນະກຳມະການ ປະມູນຂາຍຕາມລະບຽບການ ເພື່ອເອົາລາຍຮັບເຂົ້າງົບປະມານ;
- ໃຫ້ໂຈະການນຳເຂົ້ານ້ຳມັນດຳ, ນ້ຳມັນດິບ ຂອງບັນດາໂຮງງານປຸງແຕ່ງ ຈົນກວ່າຈະມີການປັບປຸງຂັ້ນຕອນການຜະລິດຂອງໂຮງງານ ໃຫ້ໄດ້ມາດຖານສາກົນ.
- ເພີ່ມທະວີການຄຸ້ມຄອງກວດກາ ວັດຖຸອຸປະກອນ,ນ້ຳມັນເຊື້ອໄຟ ແລະ ອື່ນໆ ທີ່ນຳເຂົ້າດ້ວຍຮູບການຍົກເວັ້ນພາສີ ຂອງໂຄງການລົງທຶນ ເພື່ອຮັບປະກັນໃຫ້ນຳໃຊ້ຖືກຕ້ອງຕາມເປົ້າໝາຍ.

3. ມອບໃຫ້ຫົວໜ້າກົມພາສີ ເປັນເຈົ້າການ ສ້າງແຜນການເຄື່ອນໄຫວ, ກຳນົດເປົ້າໝາຍ ໃນການລົງຕິດຕາມ, ກວດກາ, ແນະນຳທາງດ້ານວິຊາສະເພາະ ແນໃສ່ເພື່ອກະຕຸກຊຸກຍູ້ ບັນດາດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ

4. ເພື່ອຮັບປະກັນການດຳເນີນແຜນການດັ່ງກ່າວ, ກະຊວງການເງິນ ມອບສິດໃຫ້ຫົວໜ້າກົມພາສີ ໃນການສ້າງຕັ້ງຄະນະສະເພາະກິດຂອງຂະແໜງພາສີ ຊຶ່ງປະກອບດ້ວຍຫົວໜ້າ,ຮອງຫົວໜ້າພະແນກການກົມພາສີ; ຫົວໜ້າ,ຮອງຫົວໜ້າພາສີປະຈຳເຂດ ເພື່ອຈັດຕັ້ງເຄື່ອນໄຫວຕາມແຜນການທີ່ໄດ້ກຳນົດໃນຂອບເຂດທົ່ວປະເທດ.

ພາຍຫລັງຈັດຕັ້ງປະຕິບັດໃນໄລຍະນຶ່ງແລ້ວ, ກົມພາສີ ຕ້ອງໄດ້ສັງລວມລາຍງານ ໃຫ້ຄະນະນຳກະຊວງການເງິນຊາບ ເພື່ອມີຄຳເຫັນຊີ້ນຳ.

5. ໃນກໍລະນີພົບເຫັນການກະທຳຜິດຂອງເຈົ້າໜ້າທີ່ພາສີ ທີ່ສົ່ງຜົນເສຍຫາຍຮ້າຍແຮງຕໍ່ຄວາມໝັ້ນຄົງທາງດ້ານເສດຖະກິດ-ສັງຄົມ ກໍ່ຄືມີຜົນກະທົບໂດຍກົງຕໍ່ການຕົກເຮັ່ຍເສຍຫາຍຂອງລາຍຮັບງົບປະມານແຫ່ງຊາດ, ມອບສິດໃຫ້ຫົວໜ້າກົມພາສີ ອອກແຈ້ງການ ຍົກຍ້າຍຜູ້ກ່ຽວໃນທັນທີ ເພື່ອບໍ່ໃຫ້ຕິດພັນກັບວຽກລາຍຮັບ ຫຼື ໂຈະການປະຕິບັດງານຊົ່ວຄາວ ແລ້ວລາຍງານໃຫ້ກະຊວງການເງິນຮັບຊາບພາຍຫຼັງ, ໃນໄລຍະລໍຖ້າດຳເນີນຕາມຂັ້ນຕອນກວດສອບຄວາມເປັນຈິງ ແລະ ປະຕິບັດວິໃນ ຕາມລະບຽບລັດຖະກອນ.

6. ສຳລັບຫົວໜ່ວຍທຸລະກິດ ບຸກຄົນ ນິຕິບຸກຄົນ ທີ່ມີເຈດຕະນາລັກລອບໜີພາສີ, ເຊື່ອງອຳຄ່າພາສີແລະພັນທະອື່ນ ດ້ວຍຮູບການລະເມີດຕໍ່ລະບຽບກົດໝາຍພາສີ ແລະ ກົດໝາຍທີ່ກ່ຽວຂ້ອງ ຊຶ່ງມີຜົນກະທົບຮ້າຍແຮງຕໍ່ລາຍຮັບງົບປະມານແຫ່ງຊາດ ແລະ ເປັນການກະທຳທີ່ບໍ່ເຂັດລາບ, ມອບໃຫ້ກົມພາສີ ອອກແຈ້ງການ ງົດການນຳເຂົ້າ-ສົ່ງອອກ ສິນຄ້າເຄື່ອງຂອງ ຂອງຫົວໜ່ວຍທຸລະກິດດັ່ງກ່າວ ຫຼື ຖອນທະບຽນດຳເນີນທຸລະກິດ.

7. ໃນສົກປີ 2014-15, ລັດຖະການພາສີທຸກຂັ້ນ ຕ້ອງໄດ້ອອກແຮງເພີ່ມທະວີວຽກງານຕ້ານສະກັດກັ້ນການລັກລອບໜີພາສີທັງໃນດ່ານແລະນອກດ່ານ ໃຫ້ມີຄວາມເຂັ້ມແຂງ; ຈຳກັດບັນດາຊ່ອງວ່າງທີ່ພາໃຫ້ມີການເຊື່ອງອຳຄ່າພາສີແລະພັນທະອື່ນ ໂດຍການແຈ້ງຂໍ້ມູນສິນຄ້າບໍ່ຖືກ ເປັນຕົ້ນຂໍ້ມູນດ້ານຊະນິດ, ຈຳນວນ, ນໍ້າໜັກ, ລາຄາ ແລະ ປະເທດຜະລິດ; ສືບຕໍ່ຫັນວຽກງານພາສີ ເປັນທັນສະໄໝ ຢ່າງໜັກແໜ້ນ ໂດຍສະເພາະການຜັນຂະຫຍາຍລະບົບແຈ້ງພາສີແບບເອເລັກໂຕລນິກ ຢູ່ບັນດາດ່ານພາສີຊາຍແດນໃນທົ່ວປະເທດ ໃຫ້ເປັນລະບົບຄົບຊຸດສາມາດເຊື່ອມຕໍ່ກັບຂະແໜງການກ່ຽວຂ້ອງ ເພື່ອເປັນການກະກຽມສ້າງລະບົບການແຈ້ງພາສີປະຕູດຽວແຫ່ງຊາດ; ເອົາໃຈໃສ່ສ້າງເງື່ອນໄຂໃນການອຳນວຍຄວາມສະດວກທາງດ້ານການຄ້າ, ການກຳນົດມູນຄ່າແຈ້ງພາສີ, ການຂົນສົ່ງສິນຄ້າຜ່ານແດນສາກົນ, ການຈັດຕັ້ງປະຕິບັດແຜນຫລຸດຜ່ອນອັດຕາພາສີຂອງອາຊຽນ ແລະ ອື່ນໆ.

8. ມອບໃຫ້ກົມພາສີ, ກົມຈັດຕັ້ງ, ຫ້ອງການກະຊວງການເງິນ ແລະ ບັນດາກົມອ້ອມຂ້າງກະຊວງການເງິນ ຈົ່ງໄດ້ຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນຕາມຄາດໝາຍ.

9. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກ່ວາຈະມີການປ່ຽນແປງ.

ລັດຖະມົນຕີວ່າການກະຊວງການເງິນ

ດຣ. ລຽນ ທີແກ້ວ

ບ່ອນສົ່ງ :

- ທ່ານນາຍົກລັດຖະມົນຕີ 1 ສະບັບ "ໃຊ້ຕາງລາຍງານ"
- ທ່ານຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳວຽກງານເສດຖະກິດ 1 ສະບັບ "ໃຊ້ຕາງລາຍງານ"
- ຫ້ອງວ່າການສູນກາງພັກ 1 ສະບັບ "ລາຍງານເພື່ອຊາບ"
- ຫ້ອງວ່າການລັດຖະບານ 1 ສະບັບ "ລາຍງານເພື່ອຊາບ"
- ກົມພາສີ 1 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ບັນດາກົມອ້ອມຂ້າງກະຊວງການເງິນ, ກົມລະ 1 ສະບັບ"ເພື່ອປະສານສົມທົບ"
- ບັນດາພະແນກການເງິນປະຈຳແຂວງ,ນະຄອນຫລວງ, ພະແນກລະ1 ສະບັບ"ເພື່ອປະສານສົມທົບ"